# Special Economic Zone, Lecture two: The important of establishing SEZ

## 1. ຄວາມສຳຄັນ ແລະ ຄວາມຈຳເປັນຂອງການສ້າງ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນຮູບແບບໜຶ່ງຂອງການພັດທະນາເສດຖະກິດໂດຍກຳນົດເຂດພື້ນທີ່ສະເພາະໃດໜຶ່ງເພື່ອດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ, ນຳເອົານະໂຍບາຍຍົກເວັ້ນ ແລະ ຫຼຸດຜ່ອນພາສີ - ອາກອນມານຳໃຊ້ ເພື່ອສົ່ງເສີມການກໍ່ສ້າງພື້ນຖານໂຄງລ່າງ, ການຜະລິດເພື່ອສົ່ງອອກ, ຍົກລະດັບສີມືແຮງງານ ແລະ ຖ່າຍທອດເຕັກໂນໂລຊີທີ່ທັນສະໄໝ.

ນັກເສດຖະສາດຫຼາຍທ່ານໄດ້ໃຫ້ທັດສະນະວ່າ: ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະ ກິດສະເພາະ ແມ່ນວິທີການດຶງດູດ ແລະ ສົ່ງເສີມການລົງທຶນທີ່ດີອີກວິທີໜຶ່ງໂດຍສະເພາະຢູ່ບັນດາປະເທດທີ່ ທຸກຍາກ, ງົບປະມານໃນການພັດທະນາພື້ນຖານໂຄງລ່າງມີຈຳກັດ. ການຂໍອະນຸມັດການລົງທຶນຕ້ອງຜ່ານຫຼາຍ ຂັ້ນຕອນ ແລະ ໃຊ້ເວລາດົນ. ບົດລາຍງານຂອງທະນາຄານໂລກໃນປີ 2010 ສະແດງໃຫ້ເຫັນວ່າ: ການພັດທະ ນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະມີການຂະຫຍາຍຕົວຫຼາຍໃນໄລຍະ 20 ປີ ຜ່ານມາ ເພາະໃນປີ 1986 ມີພຽງແຕ່ 176 ເຂດໃນ 47 ປະເທດ, ແຕ່ມາຮອດປີ 2006 ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໄດ້ເພີ່ມຂຶ້ນເປັນ 3.500 ເຂດໃນ 130 ປະເທດທົ່ວໂລກ. ດັ່ງນັ້ນ, ຈຶ່ງເຫັນໄດ້ການພັດ ທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໂດຍອີງໃສ່ທ່າແຮງ ແລະ ເງື່ອນໄຂສະພາບຕົວຈິງ ຂອງປະເທດຕົນ[1].

ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະຢູ່ທຸກຂົງເຂດທີ່ສ້າງຂຶ້ນກັບເງື່ອນໄຂ ແລະ ສະພາບແວດລ້ອມຫຼາຍຢ່າງ. ດັ່ງນັ້ນ, ການກຳນົດທີ່ຕັ້ງ ແລະ ເປົ້າໝາຍການພັດທະນາເຂດເສດຖະກິດ ພິເສດ ແລະ ເຂດເສດຖະກິດສະເພາະ ແຕ່ລະເຂດຈຶ່ງມີຄວາມສຳຄັນ, ໂດຍທົ່ວໄປແລ້ວປະເທດທີ່ປະສົບຜົນສຳເລັດໃນການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນບັນດາປະເທດທີ່ມີ ເຂດແດນຕິດກັບແຄມທະເລ ເພາະມີຄວາມສະດວກຕໍ່ການນຳເຂົ້າ-ສົ່ງອອກ ແລະ ຂົນສົ່ງສິນຄ້າ; ເຊິ່ງເຮັດໃຫ້ຕົ້ນທຶນການຜະລິດຕໍ່າ, ສາມາດແຂ່ງຂັນໄດ້ທາງດ້ານລາຄາ. ສຳລັບເຂດທີ່ຕັ້ງຢູ່ໄກທະເລ ແຕ່ມີເງື່ອນໄຂທີ່ເໝາະ ສົມ, ມີນະໂຍບາຍສົ່ງເສີມທີ່ດີເຊັ່ນ: ພາສີ-ອາກອນ, ການຕະຫຼາດ, ການໂຄສະນາ, ມີສະຖຽນລະພາບທາງດ້ານ ການເມືອງ, ມີບຸກຄະລາກອນທີ່ມີຄວາມສາມາດ, ມີກົນໄກການບໍລິຫານຄຸ້ມຄອງທີ່ກະທັດຮັດ, ບໍ່ຜ່ານຫຼາຍຂັ້ນຕອນ, ສາມາດຕັດສິນບັນຫາໄດ້ໄວ ໂດຍການຍຶດຖືຫຼັກການບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະແບບທຸລະກິດ ແຕ່ຢູ່ພາຍໃຕ້ແນວທາງນະໂຍບາຍ ແລະ ການຄວບຄຸມຂອງລັດຖະບານກໍສາມາດ ພັດທະນາ ແລະ ປະສົບຜົນສຳເລັດໄດ້.

ສະຫຼຸບແລ້ວເຫັນວ່າ ຖ້າມີແນວທາງການສົ່ງເສີມທີ່ສອດຄ່ອງ, ມີການບໍລິຫານຄຸ້ມຄອງທີ່ເໝາະສົມ, ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະຢູ່ເຂດອື່ນໆ ກໍສາມາດປະສົບຜົນສຳເລັດ ແລະ ປະກອບສ່ວນໃຫ້ເສດຖະກິດພາຍໃນປະເທດຂະຫຍາຍຕົວໄດ້ໄວຂຶ້ນຢ່າງຈະແຈ້ງ.

ການສ້າງຕັ້ງເຂດເສດຖະກິດພິເສດແມ່ນມີຄວາມສຳຄັນຫຼາຍ, ເນື່ອງຈາກວ່າເຂດດັ່ງກ່າວນີ້ເປັນເຂດທີ່ມີນະໂຍບາຍ ແລະ ລະບຽບການຄຸ້ມຄອງທີ່ແຕກຕ່າງຈາກເຂດອື່ນຢູ່ພາຍໃນປະເທດ ໂດຍສະເພາະນະໂຍບາຍຫຼຸດຜ່ອນທາງດ້ານພາສີອາກອນ, ນະໂຍບາຍໃນການນຳໃຊ້ແຮງງານ ແລະ ມີລະບຽບໃນການບໍລິຫານທາງດ້ານການເງິນທີ່ອິດສະຫຼະ, ຊຶ່ງເປັນຈຸດດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ. ພ້ອມດຽວກັນນີ້, ເຂດດັ່ງກ່າວ ກໍ່ເປັນເຂດທີ່ຕ້ອງນຳໃຊ້ເງິນທຶນຈຳນວນຫຼາຍໃນການພັດທະນາພື້ນຖານໂຄງລ່າງ, ເປັນເຂດທີ່ຕ້ອງນຳໃຊ້ເຕັກໂນໂລຊີທີ່ທັນສະ

---

[1] ແຜນຍຸດທະສາດ ການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປລາວ ແຕ່ປີ 2011 ຮອດປີ 2020, ນະຄອນຫຼວງວຽງຈັນ, ກໍລະກົດ 2020,ໜ້າທີ 01-02. (Development Strategy for Special and Specific Economic Zone (SEZ) in the Lao PDR, 2011-2020

ໄໝ ແລະ ແຮງງານທີ່ມີທັກສະ. ສະນັ້ນ, ຈຸດດີໃນການສ້າງຕັ້ງເຂດເສດຖະກິດພິເສດ ແມ່ນສາມາດສ້າງແຮງຈູງໃຈ ແລະ ກະຕຸ້ນໃຫ້ນັກລົງທຶນຕ່າງປະເທດ ນຳເອົາເງິນທຶນ ຫຼື ເງິນຕາຕ່າງປະເທດ, ນຳເອົາເຕັກໂນໂລຊີ ແລະ ແຮງງານທີ່ມີທັກສະມາພັດທະນາ ຫຼື ລົງທຶນໃນເຂດດັ່ງກ່າວ.

ໃນຂະນະດຽວກັນ, ກໍ່ເປັນການຖ່າຍທອດບົດຮຽນ, ເຕັກໂນໂລຊີ, ຄວາມຮູ້ ໃຫ້ບຸກຄະລະກອນຂອງປະເທດເຈົ້າພາບ. ສ້າງໂອກາດ ແລະ ວຽກເຮັດງານທຳໃຫ້ປະຊາຊົນທີ່ດຳລົງຊີວິດຢູ່ເຂດນັ້ນ, ເຮັດໃຫ້ອັດຕາການຫວ່າງງານພາຍໃນປະເທດຫຼຸດລົງ, ເປັນການເພີ່ມຂີດຄວາມສາມາດຂອງຫົວໜ່ວຍທຸລະກິດພາຍໃນປະເທດ, ເຮັດໃຫ້ມີການລົງທຶນໃນເຂດດັ່ງຂອງຜູ້ລົງທຶນພາຍໃນປະເທດຫຼາຍຂຶ້ນ, ຊຶ່ງເຮັດໃຫ້ຜະຫຼິດຕະພັນພາຍໃນມີການຂະຫຍາຍຕົວ ແລະ ການສົ່ງອອກສິນຄ້າເພີ່ມຂຶ້ນ.

ອີກໜຶ່ງຈຸດສຳຄັນຂອງເຂດເສດຖະກິດພິເສດ, ແມ່ນສູນກາງການຮຽນຮູ້ທາງດ້ານເຕັກໂນໂລຊີ ເນື່ອງຈາກວ່າມີແຮງງານທີ່ມີສີມື ແລະ ທັກສະ ທັງຈາກພາຍໃນ ແລະ ຕ່າງປະເທດ, ຊຶ່ງກໍ່ເປັນໂອກາດທີ່ດີ ທີ່ຈະໄດ້ຖ່າຍທອດ ແລະ ແລກປ່ຽນເຜີຍແຜ່ຄວາມຮູ້ເຊິ່ງກັນ ແລະ ກັນ.

ນອກຈາກນີ້, ກໍ່ເຮັດໃຫ້ພື້ນຖານໂຄງລ່າງມີການພັດທະນາ, ເສດຖະກິດມີການຂະຫຍາຍຕົວ ແລະ ເປັນທີ່ຍອມຮັບໃນລະດັບສາກົນ.

ປະເທດໃດກໍຕາມ ທີ່ໄດ້ກຳນົດໃຫ້ມີການສ້າງຕັ້ງເຂດເສດຖະກິດພິເສດ, ຈະໄດ້ຮັບຜົນປະໂຫຍດໃນການສ້າງຕັ້ງເຂດດັ່ງກ່າວ ເປັນຕົ້ນແມ່ນຫຼຸດຜ່ອນງົບປະມານທີ່ນຳໃຊ້ເຂົ້າໃນການພັດທະນາດ້ວຍວິທີເປີດໂອກາດໃຫ້ຜູ້ພັດທະນາຈາກຕ່າງປະເທດເປັນຜູ້ພັດທະນາພື້ນຖານໂຄງລ່າງ ຫຼື ດ້ວຍຮູບການພັດທະນຮ່ວມກັນລະຫວ່າງລັດ ແລະ ເອກະຊົນ, ເນື່ອງຈາກວ່າ ຕ້ອງໄດ້ນຳໃຊ້ເງິນທຶນຈຳນວນມະຫາສານໃນການພັດທະນາ, ໃນຂະນະດຽວກັນກໍ່ເປັນເງື່ອນໄຂໜຶ່ງທີ່ເຮັດໃຫ້ລັດຖະບານ ຫຼື ນິຕິບຸກຄົນ ທີ່ພັດທະນາເຂດດັ່ງກ່າວ ສາມາດເຂົ້າເຖິງແຫຼ່ງທຶນ ຫຼື ສາມາດກູ້ຢືມເງິນຈາກລັດຖະບານ ຫຼື ສະຖາບັນການເງິນ ໃນໄລຍະຍາວດ້ວຍອັດຕາດອກເບ້ຍທີ່ຕ່ຳ ດ້ວຍເຫດນີ້, ເຂດດັ່ງກ່າວນີ້ຈຶ່ງເປັນທີ່ສົນໃຈ ແລະ ດຶງດູດການລົງທຶນໂດຍກົງຂອງນັກລົງທຶນຕ່າງປະເທດ.

ນອກຈາກນີ້, ປະເທດເຈົ້າພາບ ຫຼື ປະເທດທີ່ກຳນົດໃຫ້ມີການສ້າງຕັ້ງເຂດເສດຖະກິດພິເສດ, ຈະໄດ້ຜົນປະໂຫຍດ ເຊັ່ນ: ປະສົບການຈາກຜູ້ຊ່ຽວຊານ ແລະ ຜູ້ພັດທະນາເຂດດັ່ງກ່າວ, ຊຶ່ງຜູ້ພັດທະນາສ່ວນໃຫ່ຍແລ້ວ ແມ່ນມີປະສົບການໃນການພັດທະນາເຂດໃນລະດັບສາກົນ ຫຼືຕ່າງປະເທດມາກ່ອນແລ້ວ ແລະ ມີຄວາມສຳເຫຼັດໃນລະດັບພາຍໃນ ແລະ ລະດັບສາກົນໃນການບໍລິຫານຄຸ້ມຄອງເຂດເສດຖະກິດພິເສດ.

ບໍ່ສະເພາະແຕ່ເທົ່ານີ້, ໃນການທີ່ມີຄູ່ພັດທະນາ ທີ່ເປັນຕ່າງປະເທດກໍ່ຈະເປັນຈຸດດີໃນການດຶງດູດຜູ້ລົງທຶນມາລົງທຶນໃນເຂດດັ່ງກ່າວ, ເນື່ອງຈາກວ່າ ນິຕິບຸກຄົນ ຫຼື ຜູ້ພັດທະນາທີ່ເປັນເອກະຊົນ ຕ່າງປະເທດນັ້ນ, ສ່ວນໃຫ່ຍແລ້ວມັກຈະມີເຄືອຂ່າຍທີ່ກ້ວາງຂວາງ ຊຶ່ງສາມາດດຶງດູດໃຫ້ນັກລົງທຶນມາລົງທຶນ. ຫຍິ່ງໄປກ່ວານັ້ນ ຜູ້ພັດທະນາເຂດ ກໍ່ອາດຈະເປັນຜູ້ລົງທຶນໃນເຂດທີ່ເຂົາເຈົ້າໄດ້ພັດນານັ້ນເລີຍ.

ພ້ອມດຽວກັນນີ້, ຂະບວນການປັບປຸງນິຕິກຳກໍ່ມີການພັດທະນາ, ເນື່ອງຈາກວ່າ ການສ້າງຕັ້ງເຂດເສດຖະກິດພິເສດ ເປັນການເປີດປະຕະສູ່ໂລກພາຍນອກ ເພື່ອເປີດໂອກາດໃຫ້ນັກລົງທຶນຕ່າງປະເທດມາລົງທຶນຢູ່ພາຍໃນປະເທດ. ສະນັ້ນ, ກໍ່ມີຄວາມຈຳເປັນຕ້ອງໄດ້ປັບປຸງກົດໝາຍໃນຂົງເຂດທີ່ກ່ຽວຂ້ອງໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ໂດຍສະເພາະ ກົດໝາຍໃນຂົງເຂດເສດຖະກິດ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງເພື່ອຮັບປະກັນແລະ ປົກປ້ອງສິດຜົນປະໂຫຍດຂອງຜູ້ພັດທະນາ, ຜູ້ລົງທຶນ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ ແລະ ຜົນປະໂຫຍດລວມຂອງຊາດ.

ແນວໃດກໍ່ຕາມ, ເຂດເສດຖະກິດພິເສດແມ່ນມີຄວາມສໍາຄັນຫຼາຍ ແລະ ເຮັດໃຫ້ພື້ນຖານເສດຖະກິດຢູ່ພາຍໃນປະເທດມີການເຕີບໂຕຢ່າງໄວວາ, ເຮັດໃຫ້ພື້ນຖານໂຄງລ່າງໄດ້ຮັບການພັດທະນາໃຫ້ດີຂຶ້ນ ແລະ ເປັນທີ່ດຶງດູດນັກລົງທຶນພາຍໃນ ແລະ ຕ່າງປະເທດໃຫ້ມາລົງທຶນໃນເຂດດັ່ງກ່າວ, ເຮັດໃຫ້ປະຊາຊົນພາຍໃນປະເທດມີວຽກເຮັດງານທໍາເພີ່ມຂຶ້ນ. ໃນຂະນະດຽວກັນ, ກໍ່ເປັນການຮຽນຮູ້ ແລະ ແລກປ່ຽນ ປະສົບການ ຈາກຜູ້ຊ່ຽວຊານ ແລະ ແຮງງານທີມີທັກສະຈາກຕ່າງປະເທດ. ແຕ່ການພັດທະນາເຂດດັ່ງກ່າວນີ້ໃຫ້ປະສົບຜົນສໍາເລັດ ກໍ່ຕ້ອງອີງໃສ່ຫຼາຍປັດໄຈເຊັ່ນ: ທີ່ຕັ້ງຂອງເຂດ, ຈຸດປະສົງ ຫຼື ເປົ້າໝາຍ, ປະສົບການຂອງຜູ້ພັດທະນາ ແລະ ການບໍລິຫານເຂດ, ລະບຽບ ແລະ ລະບົບການຄຸ້ມຄອງ, ພື້ນຖານໂຄງລ່າງກໍ່ຖືວ່າເປັນສິ່ງສໍາຄັນທີ່ສາມາດຕັດສິນວ່າເຂດດັ່ງກ່າວນັ້ນຈະມີຄວາມສໍາເລັດໃນລະດັບໃດ.

ຖ້າຫາກທີ່ຕັ້ງຂອງເຂດດັ່ງກ່າວບໍ່ເໝາະສົມ, ຫ່າງໄກຊອກຫຼີກ ກໍ່ຈະເຮັດໃຫ້ການພັດທະນາມີຄວາມລໍາບາກ ແລະ ສູນເສຍເງິນທຶນຈໍານວນມະຫາສານ, ນອກຈາກນີ້. ກໍ່ຈະເຮັດໃຫ້ສິ່ງແວດລ້ອມຖືກທໍາລາຍ.

ໃນປັດຈຸບັນ, ລັດຖະບານແຫ່ງ ສປປລາວ ເຫັນໄດ້ເຖິງຄວາມສໍາຄັນ ແລະ ຄວາມຈໍາເປັນໃນການສ້າງຕັ້ງເຂດເສດຖະກິດພິເສດ ຢູ່ ສປປລາວ, ແລະ ໄດ້ມີການອະນຸມັດໃຫ້ມີການສ້າງຕັ້ງ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປລາວ ຫຼາຍແຫ່ງ ໃນທົ່ວປະເທດ. ຊຶ່ງເຂດເສດຖະກິດພິເສດ ສະຫວັນເຊໂນ ທີ່ຢູ່ພາກໃຕ້ຂອງລາວ ທີໄດ້ຮັບອະນຸມັດໃຫ້ສ້າງຕັ້ງເປັນແຫ່ງທໍາອິດຢູ່ ສປປລາວ ແຕ່ປີ 2003, ຊຶ່ງແມ່ນ ລັດຖະບານເປັນຜູ້ພັດທະນາເຂດດັ່ງກ່າວ.

ຈຸດປະສົງໃນການສ້າງຕັ້ງ ແມ່ນເພື່ອດຶງດູດການລົງທຶນ ໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດມາລົງທຶນໃນເຂດດັ່ງກ່າວ, ເພື່ອກະຕຸ້ນການເຕີບໂຕທາງດ້ານເສດຖະກິດ, ເຂດເສດຖະກິດພິເສດສະຫວັນເຊໂນ ເປັນຈຸດຍຸດທະສາດທີສໍາຄັນຂອງ ສປປລາວ, ເນື່ອງຈາກວ່າເຂດດັ່ງກ່າວ ນັ້ນມີຊາຍແດນຕິດ ກັບ ສສ ຫວຽດນາມ ແລະ ລາຊາອານະຈັກໄທ ຈຶ່ງເຮັດໃຫ້ການຂົນສົ່ງນໍາອອກສິນຄ້າ ມີຄວາມສະດວກຫຼາຍ ແລະ ສາມາດດຶງຜູ້ລົງທຶນມາລົງທຶນໃນເຂດນັ້ນໄດ້ຫຼາຍພໍສົມຄວນ.

ແນວໃດກໍ່ຕາມ ສປປລາວ ຍັງເປັນປະເທດທີ່ກໍາລັງພັດທະນາ, ມີຄວາມຈໍາກັດທາງດ້ານທຶນຮອນໃນການພັດທະນາ ແລະ ປະສົບການໃນການພັດທະນາ ແລະ ຄຸ້ມຄອງບໍລິຫານເຂດຍັງບໍ່ທັນມີຫຼາຍຍັງຈະຕ້ອງໄດ້ຮຽນຮູ້ ແລະ ສຶກສາບົດຮຽນປະສົບການນໍາຕ່າງປະເທດ ຫຼື ປະເທດທີພັດທະນາທີມີປະສົບການທາງດ້ານນີ້ມາກ່ອນຈຶ່ງຈະເຮັດໃຫ້ເຂດດັ່ງກ່າວປະສົບຜົນສໍາເລັດໃຫ້ຫຼາຍຕາມທີໄດ້ກໍານົດໄວ້.

ໃນການ ທີ ສປປລາວ ມີນະໂຍບາຍຫຼຸດຜ່ອນ ພາສີອາກອນ ແລະໃຫ້ສິດທີໃນການນໍາໃຊ້ທີດິນແກ່ນັກລົງທຶນຕ່າງປະເທດຢູ່ໃນເຂດດັ່ງກ່າວນັ້ນ, ໄດ້ສ້າງແຮງຈູງໃຈ ແລະ ເຮັດໃຫ້ການລົງທຶນຢູ່ ສປປລາວ ເພີ່ມຂຶ້ນ. ອີກດ້ານໜຶ່ງກໍ່ເປັນການສ້າງເງື່ອນໄຂໃຫ້ແກ່ປະຊົນພາຍໃນຊາດມີວຽກເຮັດງານທໍາຫຼາຍຂຶ້ນ, ຫຼຸດຜ່ອນການຫຼັ່ງໄຫຼອອກໄປເຮັດວຽກຂອງປະຊາກອນໃນປະເທດເພື່ອນບ້ານ, ໃນຂະນະດຽວກັນ ກໍ່ເປັນສູນການຮຽນຮູ້ທີ່ສໍາຄັນ ເນື່ອງຈາກວ່າລັດຖະບານໄດ້ມີນະໂຍບາຍໃຫ້ນໍາແຮງງານທີມີສີ ຫຼື ທັກສະ ຈາກຕ່າງປະເທດເຂົ້າມາເຮັດວຽກຢູ່ໃນເຂດນັ້ນ, ຊຶ່ງເປັນໂອກາດດີທີ່ພົນລະເມືອງລາວຈະໄດ້ຮັບຜົນປະໂຫຍດ ແລະ ຮຽນຮູ້ນໍາແຮງງານທີມີທັກສະທີເຂົ້າມາເຮັດວຽກຢູ່ ສປປລາວ..

ທາງດ້ານເຕັກໂນໂລຊີ ກໍ່ເປັນສິ່ງໜຶ່ງທີສໍາຄັນ ຊຶ່ງມີຄວາມຈໍາເປັນທີ່ນໍາໃຊ້ເຂົ້າໃນອຸດສະຫາກໍາການຜະລິດ ແລະ ການຄຸ້ມຄອງການນໍາໃຊ້ກົນຈັກຕ່າງໆ ຕ້ອງໄດ້ຮຽນຮູ້ ແລະ ສຶກສານໍາຜູ້ທີມີປະສົບການ. ສະນັ້ນ, ກໍ່ເປັນສິ່ງທ້າທາຍຫຼາຍ ສົມຄວນທີ ສປປລາວ ຕ້ອງໄດ້ຫັນມາພັດທະນາ ແລະ ໃຫ້ຄວາມສໍາຄັນ, ບໍ່ສະເພາະແຕ່ການສ້າງຕັ້ງເຂດແຕ່ມັນໝາຍເຖິງກົນໄກການຄຸ້ມຄອງບໍລິຫານ ແລະ ການສະແຫວງຫາຄວາມຮູ້ ແລະ ປະສົບການຈາກສາກົນຢ່າງຈິງ

ຈັງ, ທາງດ້ານແຮງງານທີ່ເປັນຄົນລາວກໍ່ຕ້ອງໄດ້ຮັບການຝຶກອົບຮົມ ແລະ ພັດທະນາໃຫ້ມີຄວາມຮູ້ຄວາມສາມາດໃນລະດັບທີ່ດີ ເພື່ອສາມາດຮັບມື ຫຼື ເຮັດວຽກໃນຂົງເຂດດັ່ງກ່າວນີ້ໄດ້ຢ່າງມີປະສິດທິພາບ.

**2. ບາງສິ່ງທ້າທາຍໃນການສ້າງຕັ້ງເຂດເສດຖະກິດພິເສດ.**

ການສ້າງຕັ້ງເຂດເສດຖະກິດພິເສດ, ເບິ່ງໂດຍລວມແລ້ວມີຄວາມສຳຄັນ ແລະ ມີໂຫຍດຫຼາຍໃນການພັດທະນາເສດຖະກິດສັງຄົມ, ເຮັດໃຫ້ເສດຖະກິດມີການເຕີບໂຕ ແລະ ເຂັ້ມແຂງ, ເຮັດໃຫ້ປະຊາຊົນມີວຽກເຮັດງານທຳ ແລະ ມີຊີວິດທີ່ດີຂຶ້ນ. ຊຶ່ງເປັນການພັດທະນາແບບຍືນຍົງ ເນື່ອງຈາກວ່າໄດ້ມີການອົບຮົມ ແລະ ຖ່າຍທອດເຕັກໂນໂລຊີ ແລະ ປະສົບການໃຫ້ປະຊາຊົນພາຍໃນຊາດ ເພື່ອໃຫ້ເຂົາເຈົ້າໄດ້ປະກອບສ່ວນ ແລະ ເຮັດວຽກຢູ່ໃນເຂດດັ່ງກ່າວ. ໃນຂະນະດຽວກັນ ພື້ນຖານໂຄງລ່າງກໍ່ໄດ້ມີການພັດທະນາໃຫ້ແທດເໝາະ ແລະ ຮັບຮອງໃຫ້ແກ່ການລົງທຶນຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ, ບໍ່ວ່າທາງດ້ານອຸດສະຫະກຳການຜະລິດ ຫຼື ອຸດສະຫະກຳການທ່ອງທ່ຽວ, ສູນການຄ້າທີ່ທັນສະໄໝ ຕະຫຼອດເຖິງສູນການສຶກສາຕ່າງໆ ຊຶ່ງຖືເປັນຖານເສດຖະກິດຂະໜາດໃຫຍ່ຂອງປະເທດ.

ແນວໃດກໍຕາມ, ໄປຄຽງຄູ່ກັບດ້ານດີ ຫຼື ຜົນປະໂຫຍດຈາກເຂດດັ່ງກ່າວນັ້ນ ກໍ່ອາດຈະມີບາງສິ່ງທ້າທາຍ ທີ່ຜູ້ພັດທະນາ ຫຼື ປະເທດເຈົ້າພາບທີ່ກຳນົດໃຫ້ມີການສ້າງຕັ້ງເຂດເສດຖະກິດພິເສດນັ້ນຄວນເອົາໃຈໃສ່ຕື່ມ ເປັນຕົ້ນແມ່ນບັນຫາສິ່ງແວດລ້ອມ, ຜົນກະທົບຕໍ່ສັງຄົມ, ການນຳເງິນທຶນເຂົ້າໃນການພັດທະນາເຂດ ແລະ ລະບົບກົດ ໝາຍ.

ການສ້າງຕັ້ງ ຫຼື ການພັດທະນາເຂດເສດຖະກິດພິເສດນັ້ນ, ສ່ວນໃຫຍ່ແລ້ວມັກຈະໄດ້ນຳໃຊ້ ຫຼື ບຸກເບີກທີ່ດິນເປັນຈຳນວນຫຼວງຫຼາຍເພື່ອພັດທະນາ, ຖ້າຫາກບໍ່ກຳນົດຈຸດປະສົງເປົ້າໝາຍທີ່ຊັດເຈນ ແລະ ແຜນບໍລິຫານຄຸ້ມຄອງທີ່ດີ ກໍ່ຈະພາໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມຢ່າງໃຫຍ່ຫຼວງ ເນື່ອງຈາກວ່າໄດ້ນຳໃຊ້ພື້ນທີ່ໃນການພັດທະນາຈຳນວນຫຼວງຫຼາຍ. ບໍ່ສະເພາະແຕ່ການນຳໃຊ້ທີ່ດິນເທົ່ານັ້ນ, ໃນພາກປະຕິບັດຕົວຈິງໃນການລົງທຶນ ກໍອາດຈະມີການສ້າງຕັ້ງໂຮງງານອຸດສະຫະກຳຂະໜາດໃຫຍ່, ຖ້າບໍ່ມີວິທີຄຸ້ມຄອງທີ່ດີກໍ່ຈະພາໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ.

ນອກຈາກນີ້ແລ້ວ, ກໍ່ອາດຈະມີຜົນກະທົບຕໍ່ສັງຄົມ ຖ້າຜູ້ພັດທະນາ ແລະ ພາກລັດຫາກບໍ່ກຳນົດແຜນການພັດທະນາ ແລະ ບໍລິຫານໃຫ້ເໝາະສົມ ແລະ ໃຫ້ປະຊາຊົນຢູ່ໃນເຂດນັ້ນໄດ້ມີສ່ວນຮ່ວມ. ແນ່ນອນ ການສ້າງຕັ້ງເຂດດັ່ງກ່າວນີ້ ກໍ່ເພື່ອເຮັດໃຫ້ເສດຖະກິດສັງຄົມມີການພັດທະນາ, ແຕ່ບາງຄັ້ງການຮຽນຮູ້ ແລະ ການເຂົ້າເຖິງຂອງປະຊາຊົນຍັງຈະຕ້ອງໄດ້ໃຊ້ເວລາໃນໄລຍະໃດໜຶ່ງໃນການພັດທະນາ ແລະ ປັບຕົວເຂົ້າກັບການພັດທະນາທີ່ໃນລັກສະນະນີ້ ແລະ ມີຄວາມເປັນໄປໄດ້ທີ່ຈະເຮັດໃຫ້ການພັດທະນາເສດຖະກິດສັງຄົມ ມີຄວາມແຕກໂຕນກັນຫຼາຍລະຫວ່າງ ເຂດເສດຖະກິດພິເສດ ແລະ ເຂດອື່ນຢູ່ພາຍໃນປະເທດນັ້ນ.

ໃນການພັດທະນາເຂດນັ້ນ ຕ້ອງໄດ້ນຳໃຊ້ທຶນຮອນເປັນຈຳນວນຫຼວງຫຼາຍໃນການສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ແລະ ເປັນໂຄງການລົງທຶນໃນໄລຍະຍາວ ໂດຍສະເພາະປະເທດທີ່ກຳລັງພັດທະນາທີ່ມີຄວາມຈຳກັດທາງດ້ານເງິນທຶນນັ້ນກໍ່ຈະເຮັດໃຫ້ການພັດທະນາບໍ່ມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນ, ທັງເປັນການສູນເສຍງົບປະມານຈຳນວນຫຼາຍ ໃນການພັດທະນາພື້ນຖານໂຄງລ່າງ. ອີກອັນໜຶ່ງ ເຂດເສດຖະກິດພິເສດ ແມ່ນເຂດທີ່ມີກົນໄກຄຸ້ມຄອງພິເສດ ແລະ ມີຄວາມເປັນອິດສະຫຼະທາງດ້ານການເງິນ, ຊຶ່ງຈະເຮັດໃຫ້ມີຄວາມສ່ຽງສູງທີ່ເງິນຕາຈະຮົ່ວໄຫຼອອກຈາກລະບົບ.

ພ້ອມດຽວກັນນີ້, ປະເທດເຈົ້າພາບ ກໍ່ຕ້ອງໄດ້ມີການປັບປຸງນິຕິກຳ, ປັບປຸງກົດໝາຍ ເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ, ຈຶ່ງຈະສ້າງຄວາມສົນໃຈ ໃຫ້ຜູ້ທີ່ຈະມາພັດທະນາ ແລະ ລົງທຶນໃນເຂດນັ້ນ, ເປັນຕົ້ນແມ່ນນະໂຍບາຍຫຼຸດຜ່ອນພາສີ ອາກອນ ແລະ ການໃຫ້ສິດພິທີເສດໃນການນຳໃຊ້ທີ່ດິນ. ຊຶ່ງມີຄວາມ

ເປັນໄປໄດ້ທີ່ກົດໝາຍ ຫຼື ນິຕິກຳທີມີຢູ່ນັ້ນອາດຈະບໍ່ສອດຄ່ອງ ແລະ ມີຄວາມຈຳເປັນຕ້ອງໄດ້ປັບເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເຂດດັ່ງກ່າວ.

ສິ່ງຂ້າພະເຈົ້າໄດ້ກ່າວ ແລະ ອະທິບາຍມາຂ້າງເທິງນັ້ນ, ແມ່ນຄວາມສຳຄັນ ແລະ ຄວາມຈຳເປັນ ແລະ ບາງສິ່ງທ້າທ້າຍໃນການສ້າງຕັ້ງເຂດເສດຖະກິດພິເສດ ແລະ ບາງສິ່ງທ້າທ້າຍທີອາດຈະເກີດຂຶ້ນ. ແນວໃດກໍ່ຕາມ,ການສ້າງຕັ້ງເຂດດັ່ງກ່າວນີ້ແມ່ນມີຈຸດດີຫຼາຍ ຖ້າຫາກວ່າມີການກຳນົດເປົ້າໝາຍຈຸດປະສົງທີຊັດເຈນ, ຖືກຕ້ອງສອດຄ່ອງ ແລະ ມີການບໍລິຫານຄຸ້ມຄອງທີດີ ກໍ່ຈະເຮັດມີຄວາມປະສົບຜົນສຳເຫຼັດໃນລະດັບສູງ, ເຮັດໃຫ້ປະຊາຊົນມີວຽກເຮັດງານທຳ, ມີຊີວິດທີດີຂຶ້ນ ແລະ ເສດຖະກິດຂອງປະເທດກໍຈະມີຄວາມເຕີບໃຫ່ຍເຂັ້ມແຂງ ແລະ ໝັ້ນຄົງ.

## ເອກະສານອ້າງອີງ


1. ແຜນຍຸດທະສາດ ການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປລາວ ແຕ່ປີ 2011 ຮອດປີ 2020, ນະຄອນຫຼວງວຽງຈັນ, ກໍລະກົດ 2020,ໜ້າທີ 01-02. (Development Strategy for Special and Specific Economic Zone (SEZ) in the Lao PDR, 2011-2020